**ບົດຄວາມເຜີຍແຜ່ຜ່ານສື່ຕ່າງໆ**

**ເອກະສານລາຍງານການເງິນບອກຫຍັງທ່ານໄດ້ແດ່?**

**ຮຽບຮຽງໂດຍ: ສຸລິຍາ ໝື່ນວິເສດ**

**ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ເອກະສານລາຍງານການເງິນ ແມ່ນເອກະສານທີ່ສຳຄັນຕົ້ນຕໍປະເພດໜຶ່ງ ທີ່ບໍລິສັດມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຫຼື ຜູ້ລົງທຶນ ຕ້ອງໃຫ້ຄວາມສຳຄັນ ເນື່ອງຈາກວ່າ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ກະກຽມເອກະສານລາຍງານການເງິນຂອງຕົນໜຶ່ງປີຄືນຫຼັງທີ່ໄດ້ຮັບການກວດສອບຈາກບໍລິສັດກວດສອບພາຍນອກ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມທີ່ໄດ້ລະບຸໄວ້ໃນລະບຽບການວ່າດ້ວຍການອອກຈຳໜ່າຍຮຸ້ນ ສະບັບເລກທີ018/ຄຄຊ ລົງວັນທີ 27 ກໍລະກົດ ປີ 2015 ທີ່ຮັບຮອງໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ຖ້າບໍ່ດັ່ງນັ້ນ ບໍລິສັດດັ່ງກ່າວກໍ່ຈະບໍ່ໄດ້ຮັບການພິຈາລະນາໃຫ້ອອກຈຳໜ່າຍຫຼັກຊັບໃນຕະຫຼາດທຶນ ສປປ ລາວ ໄດ້. ຄຽງຄູ່ກັນນັ້ນ ສຳລັບຜູ້ລົງທຶນເອງ ກໍ່ຈຳເປັນນຳໃຊ້ເອກະສານລາຍງານການເງິນ ເຂົ້າມາໃນຂະບວນການວິເຄາະຕົວເລກທາງການເງິນຕ່າງໆຢ່າງຮອບດ້ານ ເພື່ອເປັນບ່ອນອີງໃນການຕັດສິນໃຈວ່າຄວນຈະລົງທຶນຊື້ຫຼັກຊັບຂອງບໍລິສັດດັ່ງກ່າວ. ດັ່ງນັ້ນ, ໃນບົດຄວາມນີ້ ຈະມານຳສະເໜີໃຫ້ຜູ້ອ່ານຮູ້ວ່າ ເອກະສານລາຍງານການເງິນແບບຄົບຊຸດຈະປະກອບມີເອກະສານໃດແດ່ ແລະ ແຕ່ລະເອກະສານສາມາດບອກຫຍັງແດ່ໃຫ້ແກ່ຜູ້ຊົມໃຊ້, ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້:

1. **ໃບລາຍງານຖານະທາງການເງິນ (Statement of Financial Position)**: ແມ່ນໃບລາຍງານທີ່ປະກອບດ້ວຍລາຍການຊັບສິນ, ໜີ້ສິນ ແລະ ທຶນ ທີ່ບໍລິສັດນຳມາປະກອບເຂົ້າໃນການດຳເນີນທຸລະກິດ ດັ່ງນັ້ນໃນເອກະສານນີ້ ຈະບອກໃຫ້ຜູ້ຊົມໃຊ້ຮູ້ວ່າ: ຄວາມສ່ຽງທາງການເງິນຂອງບໍລິສັດມີຫຼາຍເທົ່າໃດໃນຈຸດເວລາໃດໜຶ່ງ (ເປັນຕົ້ນປະຈຳໄຕມາດ, 6 ເດືອນຕົ້ນປີ ແລະ ປະຈຳປີ). ຕົວຢ່າງ ຖ້າບໍລິສັດມີໜີ້ສິນຫຼາຍກວ່າທຶນນັ້ນ ໝາຍຄວາມວ່າບໍລິສັດດັ່ງກ່າວ ຖືກສ້າງຕັ້ງຂຶ້ນມາໂດຍອາໄສທຶນທີ່ມາຈາກການກູ້ຢືມເປັນສ່ວນໃຫຍ່ ແລະ ອາດເຮັດໃຫ້ຄວາມເປັນໄປໄດ້ທີ່ບໍລິສັດມີຄວາມສ່ຽງໃນການຊຳລະໜີ້ໃຫ້ແກ່ເຈົ້າໜີ້ຢູ່ໃນລະດັບບໍ່ສູງ. ສະນັ້ນ, ປະເດັນທີ່ຜູ້ຊົມໃຊ້ຕ້ອງໄດ້ຄຳນຶງເຖິງການວິເຄາະໃບລາຍງານນີ້ຈະປະກອບດ້ວຍຂະໜາດຂອງບໍລິສັດມີຂະໜາດໃຫຍ່ນ້ອຍເທົ່າໃດ, ຊັບພະຍາກອນ ຫຼື ຊັບສິນທີ່ນຳມາໃຊ້ໃນການດຳເນີນທຸລະກິດແມ່ນເອົາມາຈາກໃສແດ່, ພາລະຜູກພັນໃນການຊຳລະໜີ້ມີຫຼາຍໜ້ອຍເທົ່າໃດ ແລະສຸດທ້າຍ ທຶນທີ່ເຈົ້າຂອງນຳມາປະກອບມີເທົ່າໃດ. ສະຫຼຸບກໍ່ຄື ໃບລາຍງານຖານະທາງການເງິນ ຈະສະແດງໃຫ້ຜູ້ຊົມໃຊ້ເຫັນຄວາມລ້ຳລວຍຂອງບໍລິສັດ;
2. **ໃບລາຍງານຜົນໄດ້ຮັບ (Income Statement)**: ສຳລັບເອກະສານນີ້ ຈະສະແດງໃຫ້ຜູ້ຊົມໃຊ້ເຫັນເຖິງຜົນການດຳເນີນທຸລະກິດຂອງບໍລິສັດ ໃນຮອບເວລາໃດໜຶ່ງ (ປະຈຳໄຕມາດ, 6 ເດືອນຕົ້ນປີ ແລະ ປະຈຳປີ). ໃນເອກະສານນີ້ ຈະປະກອບດ້ວຍ ລາຍການທີ່ກ່ຽວກັບ ລາຍຮັບ-ລາຍຈ່າຍ ທາງກົງ ແລະ ທາງອ້ອມແລະ ທີ່ສຳຄັນກໍ່ຄືລາຍຮັບສຸດທິຂອງບໍລິສັດ ຊຶ່ງເປັນລາຍການຕົ້ນຕໍທີ່ບັນຈຸຢູ່ໃນເອກະສານສະບັບນີ້. ດັ່ງນັ້ນ, ປະເດັນທີ່ຜູ້ຊົມໃຊ້ຕ້ອງໄດ້ຄຳນຶງເຖິງ ໃນຂະນະທີ່ກຳລັງວິເຄາະໃບລາຍງານນີ້ ຈະປະກອບດ້ວຍ

ຜົນກຳໄລ ຫຼື ຂາດທຶນ, ຕົ້ນທຶນໃນການຜະລິດ ຫຼື ບໍລິການ, ລາຍຮັບ ແລະ ແນວທາງການຂະຫຍາຍຕົວຂອງລາຍຮັບ ແລະ ບັນດາຕົ້ນທຶນທີ່ຕິດພັນ;

3. **ໃບລາຍງານກະແສເງິນສົດລວມ (Cash flow Statement)**: ແມ່ນເອກະສານທີ່ອະທິບາຍກ່ຽວກັບສະພາບການເຄື່ອນໄຫວຂອງເງິນສົດເຂົ້າ-ອອກ ບໍລິສັດ, ຊຶ່ງເປົ້າໝາຍຫຼັກຂອງເອກະສານສະບັບນີ້ແມ່ນຄວາມໝັ້ນຄົງຂອງບໍລິສັດ ເພາະວ່າເງິນສົດໃນກຳມືຂອງບໍລິສັດແມ່ນມີຄວາມສຳຄັນຫຼາຍ ເພາະສະແດງໃຫ້ເຫັນລະດັບສະພາບຄ່ອງຂອງບໍລິສັດຕົວຈິງ. ຕົວຢ່າງ ຖ້າບໍລິສັດໃດຫາກມີສະພາບຄ່ອງຕໍ່າແມ່ນມີຄວາມສ່ຽງໃນການດຳເນີນທຸລະກິດ ເປັນຕົ້ນແມ່ນຄວາມສ່ຽງໃນການຊຳລະໜີ້ເຈົ້າໜີ້ການຄ້າ ແລະທະນາຄານ. ຕາມມາດຕະຖານແລ້ວ ການບັນທຶກບັນຊີຂອງບໍລິສັດແມ່ນນຳໃຊ້ຫຼັກການຄ້າງຮັບຄ້າງຈ່າຍ, ດັ່ງນັ້ນ ບາງລາຍການໃນເອກະສານລາຍງານການເງິນ ໂດຍສະເພາະແມ່ນ ໃບລາຍງານຖານະທາງການເງິນ ແລະ ໃບລາຍງານຜົນໄດ້ຮັບ ແມ່ນຍັງບໍ່ໄດ້ຮັບ ຫຼື ຈ່າຍ ເງິນສົດຕົວຈິງ. ໃບລາຍງານສະບັບນີ້ ແຍກໃຫ້ເຫັນສະພາບເງິນສົດຂອງບໍລິສັດໃນ 3 ປະເພດ ເຊັ່ນ: ກະແສເງິນສົດຈາກກິດຈະກຳການດຳເນີນງານ, ກະແສເງິນສົດຈາກກິດຈະກຳການລົງທຶນ ແລະ ແລະ ກະແສເງິນສົດຈາກກິດຈະກຳການຫາແຫຼ່ງທຶນ;
4. **ເອກະສານຊ້ອນທ້າຍ (Notes)**: ຜູ້ຊົມໃຊ້ເອກະສານລາຍງານການເງິນ ສາມາດຕີລາຄາຄວາມໂປ່ງໃສຂອງບໍລິສັດໃນການດຳເນີນທຸລະກິດ ເພາະວ່າ ອາໄສເບິ່ງລາຍການຕ່າງໆ ແລະ ຈຳນວນເງິນທີ່ຕິດພັນ ໃນບັນດາເອກະສານລາຍງານການເງິນ ແມ່ນຍັງບໍ່ສາມາດຮູ້ໄດ້ລາຍລະອຽດສຳຄັນທີ່ກ່ຽວຂ້ອງ. ດັ່ງນັ້ນ, ເອກະສານຊ້ອນທ້າຍຈຶ່ງເປັນເຄື່ອງມືໜຶ່ງ ເພື່ອມາອະທິບາຍໃຫ້ຜູ້ຊົມໃຊ້ເຂົ້າໃຈ ເນື້ອໃນທີ່ຕິດພັນນຳແຕ່ລະລາຍການຢ່າງຄົບຖ້ວນ. ສິ່ງທີ່ຄວນວິເຄາະໃນເອກະສານສະບັບນີ້ ແມ່ນ ນະໂຍບາຍຂອງບໍລິສັດ, ເຫດການທີ່ຜິດປົກກະຕິ ແລະ ເຫດການທີ່ສຳຄັນ ແລະ ເນື້ອໃນຕ່າງໆທີ່ຍັງບໍ່ໄດ້ສະແດງໃນເອກະສານລາຍງານການເງິນ.

ສະຫຼຸບແລ້ວ ກ່ອນທີ່ບັນດາທ່ານຈະຕັດສິນໃຈລົງທຶນ ໃນຫຼັກຊັບຂອງບໍລິສັດໃດໜຶ່ງ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແມ່ນ ຮຽກຮ້ອງໃຫ້ມີຄວາມຮູ້ຄວາມເຂົ້າໃຈ ທາງການເງິນໃນລະດັບໃດໜຶ່ງ ໂດຍສະເພາະແມ່ນການວິເຄາະບັນດາເອກະສານລາຍງານການເງິນ ເພື່ອຮັບປະກັນການລົງທຶນທີ່ມີປະສິດທິພາບຂອງຜູ້ລົງທຶນເອງ.